**Attachment 3: Letter of Approval from Public Health**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອຸດົມໄຊ
ພະແນກສາທາລະນະສຸກແຂວງ

ເລກທີ: 1138 /ພສທ.
ວັນທີ 10 JUN 2015

# ໃບແຈ້ງການ

**ເຖິງ:** ຫົວໜ້າຫ້ອງການສາທາເມືອງງາ ແຂວງອຸດົມໄຊ.
**ເລື່ອງ:** ແຈ້ງການເຖິງບັນດາບ້ານ ທີ່ຂຶ້ນກັບສຸກສາລາແສນຈອດເຂົ້າຮັບການບໍລິການກວດ ແລະ ປິ່ນປົວ ພະຍາດ ແຂ້ວ, ຫູ, ຕາ, ແມ່ມານ, ເດັກນ້ອຍ ແລະ ຜູ້ໃຫຍ່ ກັບທີມງານແພດ ຈາກໂຮງໝໍແຂວງອຸດົມໄຊ.

- ອີງຕາມ: ແຜນການຊ່ວຍເຫຼືອ ຂອງມູນນິທິຟື້ນຟູສຸຂະພາບລາວ ປະຈໍາປີ 2015 ກ່ຽວກັບວຽກງານ ຮັກສາສຸຂະພາບ ແຂ້ວ, ຫູ, ຕາ, ແມ່ມານ, ເດັກນ້ອຍ.

ທາງວິຊາການແພດ ຈາກໂຮງໝໍແຂວງອຸດົມໄຊ ສົມທົບກັບມູນນິທິຟື້ນຟູສຸຂະພາບລາວ ຈະໄດ້ລົງກວດ ແລະ ປິ່ນປົວຕາໃຫ້ພໍ່ແມ່ປະຊາຊົນຢູ່ ສຸກສາລາແສນຈອດ ເມືອງງາ ເປັນເວລາ 2 ວັນ ຄືວັນທີ 19-20 ເດືອນ 06 ປີ 2015.

ດັ່ງນັ້ນ ຈຶ່ງໄດ້ແຈ້ງມາຫ້ອງການສາທາເມືອງ ຈົ່ງແຈ້ງການເຖິງສຸກສາລາແສນຈອດ ເພື່ອກະກຽມສະຖານທີ່ ບໍລິການກວດ ໃຫ້ແກ່ທີມງານ ພ້ອມກັບແຈ້ງການໃຫ້ເຖິງພໍ່ແມ່ປະຊາຊົນ ຢູ່ບັນດາບ້ານທີ່ຮັບຜິດຊອບ ເຂົ້າມາ ຮັບບໍລິການກວດ ແລະ ປິ່ນປົວພະຍາດແຂ້ວ, ຫູ, ຕາ, ແມ່ມານ, ເດັກນ້ອຍ ແລະ ຜູ້ໃຫຍ່ ນໍາໂຄງການ ດັ່ງກ່າວດ້ວຍ (ກວດ ແລະ ປິ່ນປົວ ແມ່ນບໍ່ໄດ້ເສຍຄ່າ).

**ໝາຍເຫດ:** ກະກຽມພະນັກງານຈາກໂຮງໝໍເມືອງເຂົ້າຮ່ວມນໍາ ຈໍານວນ 02 ທ່ານ (ທ່ານໝໍທົ່ວໄປ 01 ທ່ານ ແລະ ແພດພະຍາບານ ຫຼື ທ່ານໝໍ ທີ່ຜ່ານການຝຶກອົບຮົມການນໍາໃຊ້ເຄື່ອງ ເອໂກກຼາຟີ 01 ທ່ານ) ສ່ວນຄ່າໃຊ້ຈ່າຍອັດຕາກິນ ແມ່ນມູນນິທິຟື້ນຟູສຸຂະພາບລາວ ເປັນຜູ້ຮັບຜິດຊອບ.

ຫົວໜ້າພະແນກສາທາລະນະສຸກແຂວງອຸດົມໄຊ

ດຣ. ຄໍາພັນ ໄຊຍະວົງ
Dr Khamphan XAYAVONG

ສອບຖາມເພີ່ມເຕີມພົວພັນ: ດຣ. ເພັດສະໝອນ ອິນດາລາ ໂທ: 22203708, Fax: 081-212947